## ບຸນທະນອງ ຊົມໄຊພົນ



# ກ່ອມໂລກ ດ້ວຍຄຳກະວີ

ດກະວີແລະບົດເພງເລືອກເຟັ້ນ ຄສ. 1970-1999



ດ້ວຍຄວາມປຽວເຫງົາແລະເຈັບປວດ

ຂ້ອຍຈັບປາກກາຂື້ນມາຂຽນໜັງສື

ເຮົາທ່ພຽງເສລີສຸບ

ຜູ້ມີມຶກເປັນເລືອດ

ມີເສລີພາບເປັນລົມຫາຍໃຈ

ພຽງເປັນແລະຫວັງເທົ່ານັ້ນ

ມັນທ່ລາຍ ຫານແລະມາກມາຍ

ເກີນກວ່າຊະຕາກຳນັ້ນຈະເຂົ້າໃຈ

ເຫັນໃຈຫລືທໍ່ໃຈ

ເມື່ອມີປຸ ເຮົາທ່ເປັນ

ເມື່ອບໍ່ມີປຸ ເຮົາທ່ບໍ່ເປັນ

ຊະຕາກຳກ່ບໍ່ຮູ້ຕົວເອງປຸແລ້ວ -

ບໍ່ແມ່ນຫວະ ?

# ກ່ອມໂລກ
# ດ້ວຍຄຳກະວີ

**ບົດກະວີ ແລະບົດເພງ ເລືອກເຟັ້ນ ຄສ 1970–1999**

© ຄສ 2008 : ບຸນທະນອງ ຊົມໄຊພົນ


- ບົດຂຽນສ່ວນໃຫຍ່ໄດ້ຜ່ານການກວດກາແລະ ອອກໜັງສືພິມ ວາລະສານຕ່າງໆມາແລ້ວ
- ພິມຈຳນວນຈຳກັດທີ່ **ໂຊກໄຊ ການພິມ** ໂທລະສັບ 021214812
- ຮູບໜ້າປົກ: ກຽດຕິສັກ ມະນູນສັກ (ນັກແຕ້ມຂອນແກ່ນ)
- ຮູບປະກອບ: ບຸນທະນອງ ຊົມໄຊພົນ
- ອອກແບບຈັດໜ້າ : ພູມະລິນ ຊົມໄຊພົນ
  ອຸດົມການ ຊົມໄຊພົນ
- ຕິດຕໍ່ພົວພັນ: ຕູ້ ປ.ນ 4547
  ມືຖື: 020 5408783
- ຜະລິດແລະຈຳໜ່າຍ:

ລາວດວງເດືອນ Production

ບຸນທະນອງ ຊົມໄຊຜົນ



# ກ່ອມໂລກ ດ້ວຍຄຳກະວີ

ບົດກະວີແລະບົດເພງເລືອກເຟັ້ນ ຄສ. 1970-1999

## ສາລະບານ


| | |
|---|---|
| ນຳຄຳກະວີ: ນົກຄືເລືອດເສລີພາບຄືລົມຫາຍໃຈ | 1 |
| **ພາກທີ 1 ກ່ອມຮັກດ້ວຍຄຳກະວີ** | 3 |
| ກີຕາ ແລະ ຄວາມຮັກ | 5 |
| ພາບເກົ່າແລະລາງຝັນ | 10 |
| ສັດຈະ | 11 |
| ບົດກະວີຮັກຈາກຮ້ານກາເຟ | 12 |
| ໄຟຄວ້າດາວ | 18 |
| ຜົນີຫົວໃຈລ້ານໜ່ວຍ | 24 |
| ໃບໄມ້ແຫ້ງແລະແມງປີ | 27 |
| ຊາກຮັກໃນໂລງຫົວໃຈ | 28 |
| ແມ່ຂອງແລະຫາດດອນຈັນ | 29 |
| ທຸກຄັ້ງເມື່ອດອກຮັກອຳກິບບານ | 30 |
| ດື່ມຣົມ | 31 |
| ເຮືອພອຍລອຍທະເລກວ້າງ | 32 |
| ນົກເຂົານ້ອຍ | 33 |
| ແມງເມົ່ານັກບິນເຂົ້າກອງໄຟ | 35 |
| ຊີວິດຕ່ອງສູ້ | 36 |
| ຍັງຄອຍຮັກຈາກນາງ | 37 |
| ສຽງເອີ້ນຂ້າມທະວີບ | 39 |
| ແຄມໜອງBogensee | 41 |
| ໃບໄມ້ແຫ້ງ ລົມໜາວແລະຄວາມປຽວພອຍ | 43 |
| ຫິມະ ພະຈັນແລະຫົວໃຈ | 44 |
| ບົດກະວີ ກີຕາແລະແກ້ວເຫລົ້າ | 45 |
| ແນມນຳຝົນ | 47 |
| ໄກເຈົ້າ | 49 |
| ບໍ່ອາດຕາຍໃນຄວາມຝັນ | 50 |
| ຮີມສີບແລະມື | 51 |
| ສຽງແຄນ ເຂົ້າໜຽວແລະດອກຈຳປາ | 52 |
| ເພື່ອນູ້ຂ້ອຍຄືນວ່າງງານ | 53 |
| ສຽງຖວຍ | 55 |
| ກະວີເຖິງ Nelson Mandela | 56 |
| ຊີວິດຂ້ອຍ | 57 |

## ພາກທີ 2 ກ່ອນຊີວິດ້ວຍອຸດົມການ 59


ຢູ່ດ້ວຍລົມຫາຍໃຈຂອງມະນຸດຊາດ 61
ກະວີຈາກຫນ່ວຍຕາສີດໍາ 62
ຊີວິດເທິງເປ 65
ຫັນຫລັງໃສ່ກັນ 67
ດອກໄມ້ແລະປ້າຍທ້າມ 69
ຫົວໃຈລ້ານຫອັງ 71
ຂ້າງຖະໜົນ 72
ເດີນດົງ 4 ລະດູ 74
ຄືນສ້າງໂລກ 75
ສີທອງພະຍາອິນຊີຂອງຍຸກສະໄໝ 77
ບ້ານລາວ 79
ລຍນ້ໍາຕາພູເຂົາ 81
ນ້ໍາບໍ່ທັນຖ້ວມຟ້າປາຍປາຄົດກິນດາວ 83
ທູບທອນຄໍາສັນຍາ 84
ດ້ວຍເລືອດແລະໄຟ (ສປປລ.ຄົບຮອບ 10 ປີ ) 86
ຢາຄົດຈະມອດແສງດາວ 93
ມື້ຈະມາຮອດ 95
ລືມແລະມີ 97
ເຈົ້າເປັນສະມາຊິກພັກແລ້ວບໍ່? 98
ອີກຫນຶ່ງຄືນ 100
ເດືອນຫງາຍຍາມໃກ້ແຈ້ງ 101
ຄິດຕໍ່ນ້ອງ 103
ຮອຍຍິ້ມບົນເສັ້ນທາງ 104
ຄືນເຝົ້າປ່າ 106
La pagode 107
ບົນເສັ້ນທາງຂ້າມພູເຂົາ 109
ດື່ມເຫລົ້າໄຫໃຕ້ແສງກະບອງ 111
ລ່ອງວາລີຂຽນກະວີໃຕ້ແສງເດືອນ 113
ບາງກອກ 115
ຄອງແສນແສບ 116

ພາກທີ 3 ກ່ອມຈິດວິນຍານ ດ້ວຍເສລີພາບ 117

ຈູາກຍ່ານໜຶ່ງຂອງຊີວິດຂ້າງຖະໜົນ 119
ດອຍສຸລາແລະນາລີ 122
ກະວີດ້ອຍພັດທະນາ 125
ສານວິນຍານລາວຄຶດຮອດ 127
ໄປໜ້າກ້າວໜຶ່ງຖອຍຫລັງສອງກ້າວ 129
ຫົນທາງ 134
ໃຕ້ເງົາຂາມຍາມແສງຈັນສ່ອງຟ້າ 138
ຮ້ານນ້ອຍຄອຍຮັກ 140
ທາງຄູວຽງ 142
ເມົາກັບຜີ 145
ບາງແສນ 147
ສານຕອບສາວໄຊຍະພູມ 148
ເຈັບນີ້ເລີກ 150
ດຽວດາຍ. 151
ເສລີພາບ 153
ຫ້ອງນີ້ຂາດສາຍລົມແລະແສງແດດ 156
ເໝືອນກັບວ່າ 157
ນາງຟ້າໃນຈອກເບຍ 158
ກະວີພະເນຈອນ 160
ແມ່ຂອງບໍ່ເຄີຍໄຫລກັບ 162
ປຣັຊຍາໃນມຸ້ງ 165
ປະຊາທິປະໄຕໃນໄຫເຫລົ້າ 167
ຫາຍໃຈໃນຄວາມຝັນ 169
ປຣັຊຍາມະຍົກມະຍ່ອຍ 171
ສານຈາກຈິດວິນຍານອິດສະຫລະ 175
ລະຄອນຊີວິດບົນຖະໜົນປູຍາງ 178
ດອກຫຍ້າແຫ້ງໆໃນໂຖປາກແຫວ່ງໆ 180
ລະອອງທຸລີຂອງແຜ່ນດິນ 182
ດອກໄມ້ແລະດວງດາວ 183
ເຈົ້າອຳນາດວາດສະໜາກັບຜູ້ໄຝ່ຄວ້າວິເວກແລະສັນໂດດ 184

**ພາກທີ 4 ກ່ອມສັງຄົມດ້ວຍສຽງເພງ** 187
ເຫັນພຽງພາບ 189
ສຽງແຄນບ້ານເຮົາ 190
ມ່ອນຊື່ນ 12 ຕຸລາ 192
ຊົມເຊີຍສະພາຜູ້ແທນປະຊາຊົນ 193
ແຜ່ນດິນນີ້ແມ່ນຂອງລາວ 194
ໜຸ່ມສາວ 196
ສາວແຄມຂອງ 197
ສຽງແຄນ 198
ນັກດົນຕີ 200
ຍາມອ້າຍຢາກບອກຮັກ 201
ຂອບໃຈແມ່ເຖົ້າ 202
ຈຳປາບານ 204
ຍາມຍັງໜຸ່ມ 205
ດາວໃນດວງໃຈ 206
ພາບອະນຸສອນ 207
ຄາລົມຜູ້ຊາຍ 208
ຄາລົມຜູ້ຍິງ 209
ວັນໃດ 210
ພໍ່ກະດອດ 211
ຫອມບໍ່ເຫີຍ 212
ໂລກແລະຄົນ 213
ແຮງໃຈ 214
ຂໍເປັນສາຍນ້ຳຂອງ 215
ຍິງແລະຊາຍ 216
ຫົວໃຈພະເນຈອນ 218
ນາງເອີຍນາງ 219
ບອກວ່າຢາມາຢອກ 220
ຢກັນແບບລາວໆ 223
ຄົນຕ່າງຖິ່ນ 224
ເລື່ອງນີ້ມີມາຊ້ານານ 226
ຝາກໃຈໄວ້ຫລວງພະບາງ 229

| | |
|---|---|
| ວຽງຈັນບ້ານເຮົາ | 230 |
| ເລີຍກາຍທ່ຽງຄືນ | 231 |
| ໜຸ່ມນັກຂ່າວສາວຊາວນາ | 232 |
| ກັບຄືນບ້ານນາ | 233 |
| ເຮືອຄາຫາດ (ແກ້ງກະເບົາ) | 234 |
| ດິນແຜ່ນນີ້ລ້ຽງເຮົາໃຫຍ່ມາ | 235 |
| ຟ້າເມີນໜ້າໜີຜີຫັນໜ້າມາ | 237 |
| ຮູ້ແກ່ໃຈ | 238 |
| ອາບໜອນຄືນ້ຳຕາ | 239 |
| ຄືນໃຈລອຍ | 240 |
| ຂອງຂວັນຈາກຜີ | 242 |
| ຫ້ອຍເລີກຜາຊັນ | 243 |
| ເຜີຍໃຈ | 245 |
| ຮັກນ້ອງຜູ້ດຽວ | 246 |
| ຄືນເດືອນຫງາຍ ອ້າຍຄິດເຖິງນາງ | 247 |
| ແຄມນ້ຳຄານ | 248 |
| ສິກຮຽນໃໝ່ | 249 |
| ຂໍເປັນຕົວເອງ | 250 |
| ໃຈແມ່ ໃຈນ້ອງ ແລະ ໃຈອ້າຍ | 252 |
| ຢ່າໜີຈາກອ້າຍໄປເລີຍ | 253 |
| ຮັກແລະເປັນຫ່ວງ | 254 |
| ສຸດສັບປະດາ | 255 |
| ຫລວງພໍ່ເງິນ | 257 |
| ເກີດເປັນຄົນ | 258 |
| ຄວາມງາມກິນບໍ່ໄດ້ | 259 |
| ລາວເດີມໆ | 260 |
| ຄ.ຄົນທຳມະດາ | 262 |
| ບົວທອງ (ພາກ 1) | 263 |
| ໂລກາວິບັດ | 264 |


24 / VII
ห้ามจำหน่าย

ນ້ຳຄຳກະວີ :
ມີກຄືເລືອດ ເສລີພາບ ຄືລົມຫາຍໃຈ.

ກ່ອນທີ່ຊີນເຜົ່າກະວີຈະສູນພັນ
ກ່ອນທີ່ຄວາມຄິດຝັນຂອງມະນຸດຈະແຫ້ງຫ່ຽວຮ່ວງຫລົ່ນເໝືອນ
ໃບໄມ້ແຫ້ງແຫ່ງລະດູການໂລກາພິວັດຫລືພາຍຝັນແຫ່ງລັດທິບໍຣິ
ໂພກນິຍົມຊຶ່ງມີພະເຈົ້າແຫ່ງເງິນຕາເປັນຜູ້ລິຂິດຊີວິດມະນຸດ
ກ່ອນທີ່ບົດກະວີຈະເປັນພຽງເສດເຈ້ຍ (ອະນາໄມ)

ກໍຂໍໃຫ້ໄມ້ໃກ້ຝັ່ງຕົ້ນໜຶ່ງຊຶ່ງໄດ້ກຳເນີດເກີດມາດ້ວຍຄວາມຮັກ
(ແລະຄວາມໄຄ່)ຂອງບິດາມານດາ
ໄດ້ຫັດຮຽນຂຽນອ່ານດ້ວຍບົດທ່ອງຂຶ້ນໃຈຈາກປຶ້ມ ປ. ປາຂອງ
ທ່ານອາຈານມະຫາແກ້ວ ມະຫາສີລາ ວີຣະວົງສ໌
ໄດ້ນອນຫລັບໄຫລໄປກັບນິທານຄຳກອນສັງສິນໄຊ ຈຳປາ4 ຕົ້ນ
ຈາກການກ່ອມນອນຂອງແມ່ ແລະ ແມ່ເຖົ້າ
ໄດ້ດູດດື່ມຊຶມຊັບພະຍາຍາມເຂົ້າໃຈຄວາມໝາຍແທ້ຈິງຂອງ
ສານລຶພສູນ
ໄດ້ໝັ່ນພ້ຽນຂຽນແຕ່ງຄວາມໃນໃຈໃຫ້ເປັນຄຳກະວີທີ່ບັນຈຸໃສ່
ໃນຈົດໝາຍຮັກສະບັບທຳອິດ ຕາບຈົນເຖິງຄຳອວຍພອນວັນ
ເກີດໃຫ້ກັບຄູ່ຊີວິດທີ່ຢູ່ຮ່ວມກັນມາກວ່າ 30 ປີ
ໄດ້ຫັດຮ້ອງເພງຊາດ ເພງເດັກນ້ອຍນັກຮຽນ
ໄດ້ພຽນແຕ່ງເພງຄວາມຮັກ ເພື່ອກ່ອມນາງ, ເພື່ອຊີວິດ

ບົນເສັ້ນທາງວັນນະຄະດີທີ່ເລືອກແລ້ວສາຍນີ້
ໜຶ່ງກະວີທີ່ບໍ່ມີນາມມະຍົດ ບໍ່ມີຣາງວັນບໍ່ມີສະຖາບັນໃດຮອງຮັບ

ຫນຶ່ງກະວີທີ່ມີມຶກເປັນເລືອດ ມີເສລີພາບເປັນລົມຫາຍໃຈ
ໄດ້ພາຍຖົງຍ່າມອອກເດີນທາງດ້ວຍຄວາມມຸ່ງໝັ້ນຕັ້ງໃຈດ້ວຍ
ປະນິທານສູງສົ່ງ ດ້ວຍຄວາມຫວັງແຮງກ້າ ເຖິງແມ່ນຈຸດໝາຍ
ປາຍທາງເປັນເສັ້ນສຸດຂອບຟ້າແສນໄກ ຄວາມຝັນທີບທີ່ເໝືອນ
ແສງດາວແສນໄກເກີນແສງຕາ
ຫນຶ່ງກະວີທີ່ຜ່ານແດດຜ່ານຝົນຜ່ານຮ້ອນຜ່ານໜາວລ່ອນເລຮ່ອນ
ແຮມ ພັກເຊົາເອົາແຮງຕາມສາລາແຄມທາງເຊຍເຮືອນຊາວນາ
ກຸຕິຄູບາຫລືສັງຄະລີວັດ ຈາກທົ່ງຮາບກວ້າງສູ່ພູເຂົາສູງ ຈາກ
ເໜືອເຖິງໃຕ້ຕາມເສັ້ນທາງຍ່າງ ເດີນຮ່ອມທາງແດງເດີນດົງດັ້ນ
ປາປີນປາຍພູຜາລອ່ງລອຍທາຮາແຫກປາຄອນກຣິດ
ພຽງຫນຶ່ງກະວີມີພຽງສະໝອງແລະສອງຝ່າມື ຖືຕິດຕົວໄປຢູ່ໃນ
ຖົງຍ່າມມີພຽງປາກກາເຈ້ຍສາປື້ມອ່ານ
ພຽງຫນຶ່ງກະວີ ມີຫນຶ່ງຫົວໃຈ ຫລາກຫລາຍຄວາມຄິດ ຈິດໃຈ
ກວ້າງຂວາງ ຈິນຕະນາການກວ້າງໄກ
ພຽງຫນຶ່ງກະວີຫາກຜລີຊີວິດເພື່ອເຊ່ຍຄົ້ນຫາ ຄຸນຄ່າຂອງຄົນ
ຄວາມມີຄວາມຈົນ ຄວາມຊົ່ວຄວາມດີ ເສລີແລະທາດ
ສັດຈະແລະອະທັມ
ບໍ່ອາດຮູ້ໄດ້ ຫລັກໝາຍຊີວິດ ລິຂິດບໍ່ເປັນ
ຊີວິດຄືທາງທີ່ຕ້ອງເດີນໄປຕາມເສັ້ນສາຍລາຍມືໃຜມັນ
ຊີວິດເອີຍຊ່າງແສນສັ້ນ ສຳຄັນທີ່ເດີນໄປໃຫ້ສຸດຊີວິດ
ເຮຍຮອຍຕາມທາງທາງທີ່ຜ່ານມາອາດມີຮ່ອງຮອຍ ເສດສ້ຽວ
ຄວາມຫລັງ ເສດສ້ຽວຄວາມດີ ເສດເຫລືອຄວາມຮັກ
ສຽງເພງກະວີ
ມາເຖິງຈຸດນີ້ ເທົ່າທີ່ເຫລືອໃຫ້
ຂໍຝາກໄວ້ໃນຫົວໃຈຜູ້ອ່ານສູ່ຜູ້ສູ່ຄົນ ຫັ້ນແລ

06 ສິງຫາ 2008
ບຸນທະນອງ ຊົມໄຊພົນ



# ພາກທີ 1

# ກ່ອນຮັກດ້ວຍຄຳກະວີ

## ກີຕາ ແລະ ຄວາມຮັກ

ວັນເວລາເຄື່ອນຍ້າຍ ໄລໜີ
ຄືດັ່ງຄຳກະວີ ຄ່າໄຮ້
ຍັງຄືດວງພັນສີ ບານເບັ່ງ
ຄວາມຮັກນາງວາງໄວ້ ເຄິ່ງເສັ້ນທາງຫຣວ

ຄືນວັນເຮົາຕ່ຳຄ້ອຍ ຫງອຍເຫງົາ
ເປັນປາໄຟຜານເຜົາ ເຖົ່າກົ້ວ
ຄວາມຫລັງຍັງນອນເນົາ ຄຽງຄູ່
ຄອຍແຕ່ຄູນຄວາມຍົ້ວ ເຍາະເຍີ້ຍ ນິນທາ

ທຳນອງເພງ ເລີ່ມຕົ້ນ ສຽງຫວານ
ຍາມເມື່ອມາລາບານ ຊື່ນຊຸ່ອຍ
ເວລາຄອຍແສນນານ ມາສູ່
ນາງຜູ່ຕາກົ້ມນ້ອຍ ຍອດຊູ້ແພງຂວັນ

ຫົວເຮືອນເຮົາກ່າຍຮົ້ວ ແນມເຫັນ
ເຖິງວ່າ ພໍ່ນາງເປັນ ທ່ານທ້າວ
ແນມເດືອນດາວພໍເຫັນ ໃສ່ສ່ອງ
ກະຕ່າຍໝາຍປອງເຈົ້າ ຄູ່ຂ້າງຊີວີ

ຄວາມຝັນມີປີກກວ້າງ ໂບຍບິນ
ສະເໜ່ຫາພາຖະຫວິນ ເຜີ່ນຜ້າຍ
ແຂງໃຈເຮົາຊາວດິນ ຟັນຜ່າ
ລຸຍຜ່ານເວີນວັງຮ້າຍ ໄປ່ຢ້ານຄືນມີ

ສອງເຮົາເປັນເພື່ອນຫລິ້ນ ຍາມເຍົາ
ຍັງຈື່ລີລາເຂົາ ຍ່າງຍ້າຍ
ຫວນຫາຍາມສອງເຮົາ ຮຽນອ່ານ
ຍັງຈື່ຍາມນາງໄຫ້ ແລ່ນລົ້ມເຊຊວນ

ວັນເສົາເຮົາຕ່າງພົ້ ພານເຫັນ
ໄປສູ່ຜືນນາເຢັນ ທົ່ງກວ້າງ
ຈົນຄາວດວງຕາເວັນ ລົງຕ່ຳ
ລົດຖີບສອງຄັນຈ້າວ ແຂ່ງສູ້ ສູ່ເຮືອນ

ຍາມຮຽນພຽນຮ່ຳຮູ້ ຫລອມຕົວ
ບໍ່ປ່ອຍຕົວເມົາມົວ ແຕ່ຫລິ້ນ
ຫົວໃຈເຮົາເກງກົວ ຕອຍູ່ຕ່ຳ
ໃຈບໍ່ຫາຍສູນສິ້ນ ດຸ່ງກາວຄຽງສອງ

ສັງຂານຄານເຄື່ອນຂື້ນ ສອນສາວ
ໃຈຮັກສາວຄວາມຍາວ ຕໍ່ມື້
ສັງຄົມແນມນຳເຮົາ ຕາຕີ່
ສັງວ່າຍັງຂືນດື້ ລູບໜ້າວິງວານ

ດາວວິອວນອ່ອນນ້ອຍ ແພງເອີຍ
ຊາຍໄຝ່ປອງຊົມເຊີຍ ຊິດໃກ້
ຄວາມຕາຍຊາຍເມີນເສີຍ ຫາຍຫວງ
ດັບສິ້ລົມປານໃຫ້ ຮັກຍັ້ງຍືນຍາວ

"ວີ ມຶງເຊົາແຕ່ນີ້ ດີດາຍ
ມຶງຢາພົວພັນຊາຍ ຕ່ຳຕອ້ຍ
ຫົງທຽມຫົງບິນໄປ ເຊົາຊ່າ
ກາຕ່ຳຊານດຳດອຍ ຫ່າງເວັ້ນ ດີດາຍ"

ດາວຄືດາວສ່ອງຟ້າ ເຍືອງທາງ
ທາງແມ່ນທາງ-ສາຍທາງ ຮັກແທ້
ດາວຄືດາວດວງດຽວ ດີເດັ່ນ
ເຮົາຈຶ່ງທົນເອົາແພ້ ພໍ່ຮາຍຊູຊີ

ປອງເອົາດາວຄູ່ຟ້າ ພາໜີ
ຫວັງແຕ່ເຂີຍຄືນມື ມົ່ງລົ້ນ
ເວນນໍ ເຮົາດາວວີ ແສງຮຸ່ງ
ບິນໄຕ່ບິນພໍພົ້ນ ບໍ່ໄດ້ໄຫລຫລົງ

ແຟນຄືນງາມຮັ່ງລ້ຳ ມຸາວຽັ້ນ
ເຮົາຜູ້ທຽວທາງກວຽນ ກອງກົ້ນ
ໂອນຊາເຮົາເຖິງຜຽັ້ນ ຊາຍໃຫມ່
ເຮົາຈຶ່ງເປັນຄວາຍລົ້ມ ດ່າວດົ້ນຕາມຕົມ

ສວນຈຳປີຣື່ນກ້ອງ ສຸຽງເພງ
ເພງຈາກຄືນບັນເລງ ປ່ຽນຂອຍ
ກິຕາເຮົາຄວູນເພງ ຄຽງຄູ່
ເພງຜູ້ມີປືນດອຍ ເທືອດແທ້ງເລືອນລາງ

ໃນເຮືອນພອຍປ່ຽວຊູ້ ຊີມຊານ
ເຫລືອແຕ່ຄວາມຈາປັ້ນ ໝັ້ນຢັ່ງມ
ເຫລືອແຕ່ເງົາຄອຍປັ້ນ ຄວາມອັງ
ຄືນຊ່າງມາໃຈຫ້ຽມ ເຂັ່ນຂ້າ ໃຈກັນ

ສຽງກີຕາມ່ວນແມ້ງ ເຄີຍຟັງ
ເຄີຍຄ່ຳຄວນສຽງດັງ ຮ່ວມຮອງ
ສັງມາລືມມົນຂັງ ແສນຊື່ນ
ສຽງມ່ວນນາງຍັງກ້ອງ ບໍ່ສິ້ນທຳນອງ

ເວລາວຽນປຽນປັ້ນ ສັງຄົມ
ຄືນຮັ່ງມີຕອມຕົມ ຈົ່ມຮ້າຍ
ພາກັນກືນຄວາມຂົມ ແສນຂົ່ມ
ໄປສູ່ຄວາມເຄີຍໄດ້ ແບ່ງຊັ້ນກິນຄົນ

ດາວວິຍັງບໍ່ສິ້ນ ສະເໜ່ຫາ
ໃຈຮັກຄືເປັນມາ ບໍ່ຮ້າງ
ທາງດຽວຄືໄລລາ ດິນແມ່
ໜີຜ່າຍໄປສັນສ້າງ ຕ່າງແດ້ວນເສລີ

ຮັກນວນນາງວ່າລົ້ມ ເກສາ
ຮັກແມ່ຄືງມານດາ ພໍ່ແກ້ວ
ພົມລຳເນົາອານາ ສູງກວ່າ
ໃຈຈຶ່ງເປັນຮອຍແປ້ວ ຢ່າຮ້າງເທີ

ໄປຄືເຄື້ອຸ່ນເນື້ອ
ສຸດແມ່ນທາງເຮົາແປງ
ເປັນຄວາມຫລັງເພືອແຝງ
ເປັນທໍ່ຄວາມຝັນຄ້າງ

ນາງແພງ
ຮ່ອມເສັ້ນ
ອ່ວນອາວຄຳນຶງ
ປ່ອຍໃຫ້ອາວອນ



## ພາບເກົ່າ ແລະ ລາງຝັນ



24/VII

ພາບເກົ່າເຮົາຖ່າຍຮ່ວມກັນ
ຖືກວັນເວລາດຶດດຶ່ມກັດແຫັນຈົນຫລ້ອນແລະເຫລືອງຫລ່າ
ຄວາມຜູກພັນທີ່ເຄີຍມີມາແຕ່ໄວເຍົາ
ຖືກຕັດຂາດສະບັ້ນດົນນານມາແລ້ວ
ມັດຈຸລາດສາມາດຖືກທົ້ມຊີວິດຂອງເຈົ້າໄປ
ແຕ່ກໍ່ບໍ່ມີສິ່ງໃດພັດພາກຄວາມຮັກອອກຈາກດວງໃຈພວກເຮົາ

ພາບເກົ່າແນບກາຍອ້າຍທຸກວັນ
ລາງຝັນໃສແຈ້ງອ້າຍລໍ່າແຍງທຸກຄືນ
ຊະຕາກໍາອ້າຍເປັນພຽງຄວາມຂົມຂື່ນ
ວິນຍານອ້າຍຫາກສຸ່ມຊື່ນຝັນຮັກນ້ອງຄອຍຮວຍຮໍາ

ພາບເກົ່າຈືດຈາງຕ່າງລາງຝັນ
ຄູວາມຈິງບໍ່ເຄີຍຜາບແພ້ຈິນຕະນາການ
ຂ້ອຍພ້ອມທີ່ຈະຕາຍ
ເພື່ອໃຫ້ວິນຍານແຫ່ງຄວາມຮັກບິນທ່ອງຈັກກະວານ

## ສັດຈະ

ນາງບອກຂ້ອຍວ່າ:
ຮັກຕາເວັນຍາມຈຸດປະກາຍໄຟຢູ່ເສັ້ນສຸດຂອບຟ້າ

ຂ້ອຍບອກນາງວ່າ:
ຈັນທາໃນຄືນເພັງເປັ່ງແສງຂາວນວນຊວນຝັນ

ຫາກກາງຄືນຄືຄວາມຝັນ
ກາງວັນກໍຄືຄວາມຈິງ
ທຸກສິ່ງກະວີຝັນແລະສັນສ້າງ
ພຽງເພື່ອນາງແຫ່ງຄວາມຈິງ



# ຂໍໂທດຫຼາຍໆ

ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...



ດ້ວຍຄວາມຮັກແພງ